ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------------

ກະຊວງສາທາລະນະສຸກ

ເລກທີ 899 /ສທ

ນະຄອນຫຼວງວຽງຈັນ, ວັນທີ 12 JUN 2014

# ຄຳສັ່ງ

## ຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ

- ອີງຕາມ ກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007;
- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ສົນທິສັນຍາ ຂອງອົງການສະຫະປະຊາຊາດ ປີ 1961 ວ່າດ້ວຍຢາເສບຕິດ, ປີ 1971 ວ່າດ້ວຍວັດຖຸອອກລິດຕໍ່ຈິດປະສາດ, ປີ 1988 ວ່າດ້ວຍການຕ້ານການລັກລອບຄ້າຂາຍຢາເສບຕິດ, ວັດຖຸອອກລິດຕໍ່ຈິດປະສາດ (ມາດຕາ12 ວ່າດ້ວຍສານເຄມີຕົ້ນ);
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 178/ນຍ, ລົງວັນທີ 5 ເມສາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງຄະນະກຳມະການສະເພາະກິດ ເພື່ອຄວບຄຸມຢາປິ່ນປົວ ປະເພດຢາເສບຕິດ, ວັດຖຸອອກລິດຕໍ່ຈິດປະສາດ ແລະສານເຄມີຕົ້ນ ;
- ອີງຕາມ ທິດຊີ້ນຳຂອງພະນະທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ຄັ້ງວັນທີ 23 ພຶດສະພາ 2014.

ເພື່ອເຮັດໃຫ້ການຄຸ້ມຄອງການນຳເຂົ້າ ແລະ ນຳໃຊ້ ຢາປິ່ນປົວ ປະເພດຢາເສບຕິດ ແລະ ວັດຖຸອອກລິດຕໍ່ຈິດ-ປະສາດ ຮັບປະກັນ ແລະ ຫຼີກເວັ້ນການສວຍໃຊ້ ໃນທາງທີ່ຜິດກົດໝາຍ.

### ລັດຖະມົນຕີວ່າການກະຊວງສາທາລະນະສຸກ ອອກຄຳສັ່ງ:

ເກືອດຫ້າມຢ່າງເດັດຂາດ ການນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຊື້ຂາຍ, ຄອບຄອງ, ຂົນສົ່ງ, ນຳຜ່ານປຸງແຕ່ງ ແລະນຳໃຊ້ສານຊູໂດອີຟີດຣີນ (Pseudoephedrine) ຢູ່ ສປປ ລາວ.

ດັ່ງນັ້ນ, ຈຶ່ງມອບໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ. ຄຳສັ່ງສະບັບນີ້ ມີຜົນສັກສິດນຳແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ.

ສາດສະດາຈານ ດຣ.ເອກສະຫວ່າງ ວົງວິຈິດ